# ທະນາຄານຫວຽດຕິນເປີດສາຂາ II ຢູ່ ສປປ ລາວ




ທະນາຄານຫຸ້ນສ່ວນອຸດສາຫະກຳ ແລະ ການຄ້າຫວຽດນາມ ຫຼື ທະນາຄານຫວຽດຕິນ (Vietin) ໄດ້ເປີດສາຂາສອງຢູ່ລາວ ເຊິ່ງສາຂາໜຶ່ງແມ່ນໄດ້ເປີດຂຶ້ນຢູ່ສາທາລະນະລັດສະຫະພັນເຢຍລະມັນ ແລະ ໃນຕອນກາງຄືນຂອງວັນທີ 8 ກຸມພາ ກໍໄດ້ຈັດຕັ້ງພິທີມອບໃບອະນຸຍາດສ້າງຕັ້ງສາຂາ Vietin Bank ຢູ່ ສປປ ລາວ ແລະ ພິທີເປີດແຜ່ນປ້າຍຊື່ສາຂາ Vietin Bank ຢ່າງເປັນທາງການ ໂດຍການເປັນກຽດເຂົ້າຮ່ວມຂອງທ່ານ ສົມສະຫວາດ ເລັ່ງສະຫວັດ ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ປະທານຄະນະກຳມະການຮ່ວມມືດ້ານເສດຖະກິດລາວ-ຫວຽດນາມ, ພ້ອມນີ້ກໍມີບັນດາລັດຖະມົນຕີ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ, ທ່ານ ເອກອັກຄະລັດຖະທູດ ສສ ຫວຽດນາມ ປະຈຳລາວ, ຄະນະນຳທະນາຄານຫຸ້ນສ່ວນອຸດສາຫະກຳ ແລະ ການຄ້າຫວຽດນາມ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນໂອກາດດັ່ງກ່າວທ່ານ ດຣ ຟາມຮູຍຮຸງ (Pham Huy Hung) ປະທານສະພາບໍລິຫານທະນາຄານຫວຽດຕິນໄດ້ກ່າວວ່າ: ທະນາຄານ ຫວຽດຕິນ ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 1988 ເຊິ່ງໄດ້ແຍກຕົວອອກຈາກທະນາຄານແຫ່ງລັດຫວຽດ ນາມ ໂດຍມີພາລະບົດບາດເປັນກຸ່ມການເງິນອັນດັບນຳ

ໜ້າຂອງຫວຽດນາມ ເຊິ່ງໄດ້ເຄື່ອນໄຫວໃນຫຼາຍຮູບແບບ, ສະໜອງຜະລິດຕະພັນ ແລະ ການບໍລິການທີ່ໄດ້ມາດຕະຖານ ແລະ ມີ ວິໄສທັດທີ່ກວ້າງໄກ, ເປັນກຸ່ມການເງິນທີ່ທັນສະໄໝ, ທະນາຄານຫວຽດຕິນ ເປັນ1 ໃນ 500 ວິສາຫະກິດທີ່ໃຫຍ່ທີ່ສຸດຂອງຫວຽດນາມ ແລະ ໄດ້ຮັບລາງວັນດາວຄຳແຜ່ນດິນຫວຽດນາມ, ລາງວັນວິສາຫະກິດຄຳຫວຽດນາມ.

ທະນາຄານຫວຽດຕິນ ມີຍອດຊັບສິນລວມທັງໝົດ (31/12/2011) 21,5 ຕື້ໂດລາສະຫະລັດ, ທຶນຈົດທະບຽນປີ 2011 ມີ 962 ລ້ານໂດລາ, ທຶນທີ່ເປັນກຳມະສິດບັນລຸ 1,236 ຕື້ໂດລາສະຫະລັດ, ອັດຕາຜົນກຳໄລໃນທຶນກຳມະສິດຂອງທະນາຄານໃນປີ 2011 ມີ 30%, ອັດຕາຄວາມປອດໄພທຶນໃນປີ 2011 ມີ 10% ແລະ ມີລັດຖະບານຖືຫຸ້ນ 80%. ສຳລັບສາຂາຢູ່ ສປປ ລາວ, ທະນາຄານຫວຽດຕິນ ຈະເຮັດໜ້າທີ່ບໍລິການໂອນເງິນ, ທຸລະກິດຊື້-ຂາຍເງິນຕາຕ່າງປະເທດ, ບໍລິການບັນຊີ ແລະ ເງິນຝາກປະຢັດ ແລະ ການບໍລິການໃຫ້ກູ້ຢືມ ໂດຍຍຶດໝັ້ນພາຍໃຕ້ຄຳຂວັນ “ປອດໄພ, ມີປະສິດທິຜົນ, ໝັ້ນຄົງ ແລະ ມາດຕະຖານສາກົນ”.

ທ່ານ ສົມພາວ ໄຟສິດ ເລຂາຄະນະພັກ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ຕີລາຄາສູງຕໍ່ການມີໜ້າຂອງທະນາຄານຫວຽດຕິນ ຢູ່ ສປປ ລວ ແລະ ກໍຊົມເຊີຍຕໍ່ການຕັດສິນໃຈຂອງຄະນະນຳທະນາຄານດັ່ງກ່າວທີ່ເລືອກເອົາ ສປປ ລາວ ເປັນປະເທດທຳອິດໃນບັນດາປະຊາຊາດອາຊຽນເປັນສາຂາຂອງຕົນ ແລະ ທະນາຄານແຫ່ງ ສປປ ລາວ ພ້ອມຈະໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອທະນາຄານດັ່ງກ່າວຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງ.

ຈາກນັ້ນທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ ກໍໄດ້ມອບໃບອະນຸຍາດສ້າງຕັ້ງທະນາຄານຫວຽດຕິນສາຂາລາວໃຫ້ປະທານສະພາບໍລິຫານທະນາຄານຫວຽດຕິນ ແລະ ໃນເວລາຕໍ່ມາທ່ານ ສົມສະຫວາດ ເລັ່ງສະຫວັດ ຮອງນາຍົກລັດຖະມົນຕີຮ່ວມກັບ ດຣ ຟາມຮູຍຮຸງ ກໍໄດ້ຮ່ວມກັນເປີດແຜ່ນປ້າຍສາຂາ Vietin Bank ສາຂາລາວຢ່າງເປັນທາງການ.